ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ — ເລກທີ 2224 -- /ຫກ

ຫ້ອງການ — ນະຄອນຫຼວງວຽງຈັນ, ວັນທີ 31/07/2025

# ໜັງສືແຈ້ງເຊີນປະມູນ

1. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ ໄດ້ຮັບອະນຸມັດງົບປະມານ ປະຈໍາປີ 2025 ເພື່ອດໍາເນີນການຈັດຊື້ **ອຸປະກອນ ໄອທີ ສໍາລັບ ຫ້ອງການຈຸດບໍລິການຈັດຫາງານ 19 ຈຸດ** ເພື່ອຮັບໃຊ້ວຽກງານການເຄື່ອນໄຫວ ຂອງຈຸດບໍລິການຈັດຫາງານ ດ້ວຍການປະມູນ ແບບເປີດກວ້າງ.
2. ໄລຍະເວລາໃນການສົ່ງມອບ ຫຼື ການບໍລິການ ແມ່ນ:**[60** ວັນ]
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນພາຍໃນຕາມທີ່ໄດ້ລະບຸໄວ້ໃນ ຄູ່ມືແນະນໍາ: ຂອງທະນາຄານໂລກ ວ່າດ້ວຍຫລັກການການຈັດຊື້-ຈັດຈ້າງ ສໍາລັບປະເທດຜູ້ກູ້ຢືມ. **Procurement Regulations for IPF Borrowers fifth edition September 2023 (https://thedocs.worldbank.org/en/doc/6c0602876d68949e80820507d90a14ed-0290012023/original/Procurement-Regulations-September-2023.pdf)** ແລະ ເປີດໃຫ້ຜູ້ປະມູນທຸກໆຄົນ ທີ່ມີຄວາມເໝາະສົມຕາມບົດແນະນໍາວ່າດ້ວຍການຈັດຊື້-ຈັດຈ້າງ. ພ້ອມກັນນັ້ນ, ໃຫ້ເບິ່ງຫຍໍ້ໜ້າ 3.15, 3.18 ແລະ 3.19 ທີ່ກໍານົດໄວ້ໃນນະໂຍບາຍຂອງທະນາຄານໂລກ ວ່າດ້ວຍການມີຜົນປະໂຫຍດຊໍ້າຊ້ອນ.
4. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ ເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມເຂົ້າຍື່ນຊອງປະມູນ ຈັດຊື້ ອຸປະກອນ ໄອທີ ສໍາລັບ ຫ້ອງການຈຸດບໍລິການຈັດຫາງານ 19 ຈຸດ.
5. ບໍລິສັດທີ່ມີຄວາມເໝາະສົມ ອາດສາມາດຂໍຮັບຂໍ້ມູນຈາກ ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, **ບ້ານ ໂພນສະຫວ່າງ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 91114568, 020 29939999 Email:** domesticemploymentdivision@gmail.com
**cc:** psgproject.proc@gmail.com; phonemalykhattiya@gmail.com ແລະ ກວດກາເອກະສານປະມູນໃນເວລາໂມງການ.
6. ຊອງປະມູນຈະຕ້ອງສົ່ງຫາ ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ **(ຫ້ອງປະຊຸມ ຊັ້ນ 3) ບ້ານ ໂພນສະຫວ່າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 91114568, 020 29939999** ໃນວັນທີ ຫຼື ກ່ອນ 10 ກັນຍາ 2025, ເວລາ 14:00 ມ. ການສົ່ງດ້ວຍລະບົບເອເລັກໂຕຼນິກ ຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າ ຈະຖືກປະຕິເສດ. ການເປີດຊອງປະມູນ ຈະເປີດຕໍ່ໜ້າສາທາລະນະ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ໆກໍານົດໄວ້ຂ້າງລຸ່ມນີ້
7. ທຸກໆເອກະສານ ຈະຕ້ອງປະກອບການຄໍ້າປະກັນການປະມູນດ້ວຍກຽດ.

ຫົວໜ້າຫ້ອງການ

(ຫົວໜ້າໂຄງການ)

ບຸນຍອດ ຈັນທະວອນ